*Souphanouvong University Journal of Multidisciplinary Research and Development*

2024, Vol.9. No. 1 168-177

https://doi.org/10.69692/SUJMRD0901168

# The Development of Using Lao Language for Communication of Teacher in Phonethong District, Luangprabang Province Academic year 2020 - 2021

**Khamxay CHANHTHAHONG[1], Sangkhom SYSOUPHANH, Somvang LITHAVONG, Phanthamanath PATHOUMVANH, Maiphone INVANHKHAM**

*Department of Language Faculty of Education Souphanouvong University, Lao PDR*

[1]***Correspondence :*** *Khamxay CHANHTHAHONG, Faculty of Education, Souphanouvong University*

*Tel: +856 20 28634345, E-mail: khamxay@su.edu.la*

***Article Info:***

*Submitted: May 12, 2022*

*Revised: Feb 21, 2023*

*Accepted: Mar 02, 2023*

**Abstract**

The purposes of research are: 1) to develop the teaching of Lao language for communication for teachers at Phonthong secondary School, Phonethong District, Luang Prabang Province, 2). to examine the results of theteaching of Lao language for communication for teachers, and 3). to investigate the teachers' satisfaction with the learning activities in teaching Lao language for communication for teachers at Phonthong secondary School, Phonethong District, Luang Prabang Province. This study model was the measurement of before and after the pilot activities which employed the one – Group Pretest – Posttest Design for data collection. The target group consisted of 23 Lao language teachers at Phonthong Secondary School, Phonthong District, Luangprabang Province for the academic year 2021. The instruments used for the study comprised of 1) lesson plans on the subject of Lao language for communication for teachers. 2) pre – post tests of training achievement, 3) a questionnaire for eliciting the teachers' opinions concerning their satisfaction towards the learning activities on the Lao language teaching for communication for teachers, and 4) the assessment form of ability to speak the Lao language for trainees and the collected data was analyzed by means of calculating arithmetic mean, standard deviation and percentage.

The result vealed that: 1. The learning activities using teaching the Lao language for communication for teachers as was statistically significant at 0.00 difference with the, mean (after learning) of 12.83 and S.D. of 2.33 ($\bar{X} = 12.83$, SD=2.33) which is higher than the mean ( before learning ) of 15.91 and S.D. of 1.96 ($\bar{X} = 15.91$, SD=1.96) which is in accordance with the established assumptions. 2. The participants showed the "highest" level of satisfaction towards the learning activities using the teaching of the Lao language for communication for ($\bar{X} = 4.51$, SD=0.61). However, when considering each aspect, it could be seen that the participants show the highest "highest" level of satisfaction towards the measurement and evaluation ($\bar{X} = 4.56$, SD= 0.60), followed by the environment aspect ($\bar{X} = 4.55$, SD= 0.53), teaching and learning activities, application, lesson content and teaching methods ($\bar{X} = 4.50$, SD= 0.54), ($\bar{X} = 4.4\ 9$, SD= 0.61), ($\bar{X} = 4.46$, SD= 0.61), ($\bar{X} = 4.43$, SD= 0.56) respectively, and they were also concistant with the established assumptions.

**Keywords:** *Teaching Lao language, the use of Lao language, Lao language for communication*

## 1. ພາກສະເໜີ

ຄວາມຈະເລີນກ້າວໜ້າແຫ່ງຍຸກສະໄໝປັດຈຸບັນໃນໂລກເຮັດໃຫ້ເກີດການປ່ຽນແປງຢ່າງກະໂດດຂັ້ນ ແລະ ວ່ອງໄວໂດຍສະເພາະແມ່ນການສື່ສານພົວພັນເຊິ່ງກັນ ແລະ ກັນຂອງຄົນໃນທົ່ວສັງຄົມ. ແຕ່ໃນນີ້ຄົນເຮົາໃນສັງຄົມແມ່ນບໍ່ໄດ້ໃຊ້ພາສາດຽວກັນ. ດັ່ງນັ້ນ, ຈຶ່ງຈຳເປັນທີ່ຈະຕ້ອງໄດ້ຮຽນຮູ້ພາສາໃນການສື່ສານບໍ່ວ່າຈະເປັນພາສາຕ່າງປະ ເທດກໍຄືພາສາລາວ ເພື່ອສະດວກໃນການຕິດຕໍ່ສື່ສານ ແລະ ສ້າງຄວາມເຂົ້າໃຈລະຫວ່າງກັນ ແລະ ກັນ. ສະນັ້ນ, ຂໍກະແຈທີ່ສຳຄັນທີ່ຈະເປີດປະຕູສູ່ໂລກແຫ່ງການສື່ສານໄດ້ນັ້ນກໍຄືພາສາເພາະວ່າພາສາແມ່ນການສະແດງຄວາມໃນໃຈຂອງຕົນອອກມາໃຫ້ຜູ້ອື່ນຮູ້ອາດຈະເປັນອາການ, ສິ່ງຂອງ ຫຼື ລາຍລັກອັກສອນກໍໄດ້ເຊິ່ງຊ່ວຍໃຫ້ຜູ້ອື່ນຮູ້ຄວາມໝາຍ ແລະ ເຂົ້າໃຈໄດ້. "ພາສາແມ່ນການສະແດງຄວາມຮູ້ສຶກຂອງຕົນອອກມາໃຫ້ຜູ້ອື່ນເຂົ້າໃຈໄດ້ໂດຍຜ່ານການປາກເວົ້າ, ຂີດຂຽນ ແລະ ເຄື່ອງສັນຍານອື່ນໆເພື່ອເປັນການຕິດ ຕໍ່ສື່ສານກັນຢູ່ໃນສັງຄົມ" (Teacher Development Center (1998). ແລະ ໃນນັ້ນພາສາລາວກໍແມ່ນພາສາໜຶ່ງນັບວ່າເປັນພາສາທີ່ຄົນລາວໃນທົ່ວປະເທດໃຊ້ໃນການຕິດຕໍ່ສື່ສານກັນຢ່າງກວ້າງຂວາງກໍ່ຄືກັບພາສາອື່ນໆໃນໂລກ ຈະເຫັນໄດ້ວ່າພາສາລາວໄດ້ເຂົ້າມາມີບົດບາດໃນຊີວິດປະຈຳວັນຂອງສັງຄົມໂລກຫຼາຍຂຶ້ນຄືກັນກັບພາສາລາວທີ່ມີບົດບາດໃນສັງຄົມລາວຫຼາຍຂຶ້ນນັບຕັ້ງແຕ່ ສປປລາວໄດ້ປະກາດໃຫ້ພາສາລາວເປັນພາສາທາງການໃນວັນທີ 2 ທັນວາ ປີ 1975 ກໍ່ນັບວ່າເປັນວັນປະກາດສັກກະຫຼາດແຫ່ງການຊົມໃຊ້ພາສາລາວໃຫ້ເປັນທີ່ເອກອ້າງຕໍ່ສັງຄົມໃນທົ່ວໂລກ. ຄືດັ່ງທີ່ຮູ້ວ່າຊາດລາວມີພາສາເປັນຂອງຕົນເອງມາຕັ້ງແຕ່ດັ້ງເດີມ ແລະ ໃຊ້ສືບຕໍ່ກັນມາຈົນເຖິງທຸກມື້ນີ້ ພາສາລາວແມ່ນພາສາໜຶ່ງໃນພາສາຕ່າງໆຂອງໂລກ, ມັນກຳເນີດພ້ອມກັບການກຳເນີດຊາດລາວ. ຜ່ານຍຸກສະໄໝຕ່າງໆ ພາສາລາວກໍມີການຂະຫຍາຍຕົວຈາກຈຳນວນຖ້ອຍຄຳຢູ່ໃນວົງແຄບແລ້ວກໍມີປະລິມານແຜ່ຂະຫຍາຍກວ້າງອອກຕື່ມ. ພາສາລາວດັ້ງເດີມເປັນພາສາຄຳປ່ຽວ ຫຼື ພະຍາງດຽວເຊັ່ນ: ພໍ່, ແມ່, ດິນ, ນ້ຳ, ລົມ, ໄຟ...ເຫຼົ່ານີ້ເປັນຕົ້ນ (Teacher Development Center. (2009)). ພາສາລາວມີລັກສະນະພິເສດຂອງມັນຄືຄຳໜຶ່ງໆມີຄວາມໝາຍສະເພາະຢ່າງໜຶ່ງ. ພາສາລາວ ມີບົດບາດສຳຄັນຫຼາຍຢູ່ໃນສັງຄົມລາວເຮົາເພາະວ່າເປັນພາສາປະຈຳຊາດ, ເຊິ່ງຖືກນຳໃຊ້ເປັນພາຫະນະແລກປ່ຽນທາງດ້ານແນວຄິດ, ອາລົມຈິດ, ສື່ສານ, ຕິດຕໍ່ພົວພັນລະຫວ່າງຄົນກັບຄົນຢູ່ໃນສັງຄົມລາວເຊັ່ນ: ການພົວພັນທາງດ້ານເສດຖະກິດ, ການເມືອງ, ການທະ ຫານ, ວັດທະນະທຳ - ສັງຄົມ ແລະ ດ້ານອື່ນໆ (Teacher Development Center. (2009)). ເຫັນໄດ້ວ່າ: ພາສາລາວມີຄວາມສຳຄັນບໍ່ໜ້ອຍຕໍ່ກັບຊາດລາວເຊິ່ງມັນໄດ້ຕິດພັນ ແລະ ສະໜິດແໜ້ນກັບການດຳລົງຊີວິດຂອງຊາວລາວມາແຕ່ມື້ກຳເນີດຈົນເຖິງປັດຈຸບັນຄືມັນໄດ້ເຂົ້າໄປແຊກຊ້ອນໃນປັດຊະຍາຊີວິດອັນໄດ້ປະກອບສ່ວນໃຫ້ຊາດມີຄວາມສີວິໄລຄືກັບຊາດອື່ນໆໃນໂລກ. ອີກຢ່າງຊາດລາວປະກອບມີຫຼາຍເຜົ່າທີ່ມີພາສາປາກເວົ້າເປັນຂອງຕົນເອງເປັນເຫດໃຫ້ມີປະກົດການການໃຊ້ພາສາລາວຜິດພ້ຽນໄປຈາກຫຼັກໄວຍາກອນ ແລະ ໜ່ວຍສຽງທີ່ກຳກັບ, ການນຳໃຊ້ຄຳມີລັກສະນະຖືກໆ ຜິດໆ, ຕະຫຼອດຮອດການອອກສຽງຜິດພ້ຽນຈາກ ໜ່ວຍສຽງຂອງອັກຂະຫຼະລາວ, ສ່ວນຫຼາຍແມ່ນຂຽນ ແລະ ອອກສຽງເປັນໄປຕາມສຳນຽງທ້ອງຖິ່ນສຽງຂອງພາສາປາກເວົ້າຂອງເຜົ່າຕົນເອງ ຫຼື ອີງໃສ່ຄວາມເຄີຍຊິນຂອງກຸ່ມຄົນທີ່ເຄີຍພົວພັນ, ເຊິ່ງກາຍເປັນສາເຫດທີ່ນຳໄປສູ່ການສື່ສານພາສາລາວກໍ່ຄືພາສາແຫ່ງຊາດນັ້ນເກີດຄວາມສັບສົນ, ເກີດຄວາມຫຍຸ້ງຍາກ ແລະ ພົບອຸປະສັກຢ່າງແຜ່ຫຼາຍເພາະການສື່ສານຖ້າຜູ້ສື່ສານສົ່ງສານອອກໄປເມື່ອຜູ້ຮັບສານຕີຄວາມໝາຍຜິດພາດກໍສະແດງວ່າຄວາມຜິດທຸກຢ່າງແມ່ນຕົກເປັນຂອງຜູ້ສື່ສານ. ເພື່ອເປັນການຊອກຫາວິທີໃນການແກ້ໄຂບັນຫາທີ່ເກີດຂຶ້ນກັບພາສາລາວນັ້ນທາງລັດຖະບານຈຶ່ງເຫັນຄວາມສຳຄັນຈຶ່ງໄດ້ຈັດໃຫ້ມີການສ້າງຫຼັກສູດຮຽນໃນສາຂາວິຊາພາສາລາວນັບຕັ້ງແຕ່ປະຖົມສຶກສາຈົນເຖິງລະດັບມະຫາວິທະຍາໄລເຊິ່ງເປັນການພັດທະນາທັກສະທາງພາສາລາວໃຫ້ແກ່ນັກສຶກສາໃນການຊົມໃຊ້ເຊັ່ນ ການເວົ້າ ແລະ ການຂຽນພາສາລາວເພື່ອການສື່ສານພ້ອມນັ້ນຍັງປະຕິບັດງານຮັບໃຊ້ໃຫ້ແກ່ບຸກຄະລາກອນຄູ ແລະ ບຸກຄົນທົ່ວໄປ.

ເມືອງໂພນທອງເປັນເຂດທີ່ໝັ້ນຂອງການປະຕິວັດຊາດໃນເມື່ອກ່ອນ ແລະ ໄດ້ຮັບການສ້າງຕັ້ງຂຶ້ນໃນຄັ້ງວັນທີ 11 ກັນຍາ (09) ປີ 2009 ຕັ້ງຢູ່ທາງທິດຕາເວັນອອກສ່ຽງເ

ໜືອຂອງແຂວງຫຼວງພະບາງມີເນື້ອທີ່ທັງໝົດ 2.041 ທິດເໜືອຕິດກັບເມືອງດຽນບຽນ, ເມືອງສິບກົບ ສສ ຫວຽດນາມ, ທິດໃຕ້ຕິດກັບ ເມືອງວຽງຄຳ , ທິດຕາເວັນອອກຕິດກັບເມືອງຊ່ອນ ແຂວງຫົວພັນ, ທິດຕາເວັນຕົກຕິດກັບເມືອງງອຍ ແລະ ແຂວງຜົ້ງສາລີ, ມີພົນລະເມືອງທັງໝົດ 19.100 ຄົນ, ຍິງ 9.400 ຄົນ ໃນນັ້ນມີຊົນເຜົ່າລາວລຸ່ມ 895 ຄົນ, ຍິງ 469 ຄົນ, ກວມເອົາ 4.95%, ຊົນເຜົ່າກຶມມຸ 6.928 ຄົນ, ຍິງ 3.100 ຄົນ, ກວມເອົາ 34.81%, ຊົນເຜົ່າມົ້ງມີ 6.119 ຄົນ, ຍິງ 2.924 ຄົນ, ກວມເອົາ 33.87%, ເຜົ່າໄຕແອດ 2.776 ຄົນ, ຍິງ 1.475 ຄົນ ກວມເອົາ 15.37%, ເຜົ່າໄຕດຳມີ 1.088 ຄົນ, ຍິງ 508 ຄົນ ກວມເອົາ 6.02%, ແລະ ເຜົ່າໄຕແດງ 1.262 ຄົນ, ຍິງ 582 ຄົນ ກວມເອົາ 6.98% ສະແດງວ່າມີຫຼາຍຊົນເຜົ່າດາລົງຊີວິດຮ່ວມກັນ. ດັ່ງນັ້ນ, ການໃຊ້ພາສາລາວຍ່ອມມີການໃຊ້ທີ່ຜິດພ້ຽນ ແລະ ພົບບັນຫາໃນການສື່ສານທາງພາສາໂດຍສະເພາະກໍຄືພາສາລາວ.

ເມື່ອເຫັນໄດ້ເຖິງຄວາມສຳຄັນ ແລະ ຈຳເປັນຂອງການພັດທະນາບຸກຄະລາກອນທີ່ມີປະສິດທິພາບໃນການໃຊ້ພາສາລາວເພື່ອການສື່ສານໃຫ້ຖືກຕ້ອງ ເໝາະສົມຕາມຫຼັກໄວຍາກອນລາວ, ຕາມໜ່ວຍສຽງສຳນຽງເວົ້າ ແລະ ເພື່ອໃຫ້ເກີດຄວາມສະດວກໃນວົງສາຄະນາຍາດລາວ. ທາງກຸ່ມຜູ້ວິໄຈຈຶ່ງສົນໃຈ ແລະ ເລືອກເອົາມາເປັນບັນຫາຂອງການວິໄຈ. ເນື່ອງຈາກວ່າຢາກປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສົ່ງເສີມໃຫ້ບຸກຄະລາກອນທາງການສຶກສາມີຄວາມສາມາດ, ມີຄວາມພ້ອມໃນການສື່ສານໃນສັງຄົມກໍຄືການໃຊ້ພາສາລາວທີ່ເປັນພາສາແຫ່ງຊາດຂອງຕົນໄດ້ຢ່າງໝັ້ນໃຈ, ຖືກຕ້ອງ ແລະ ຄ່ອງແຄ້ວ ແລະ ໃນການສ້າງຫຼັກສູດຝຶກອົບຮົມພາສາລາວສຳລັບການສື່ສານນີ້ຈະເປັນການສະໜອງຄວາມຕ້ອງການ ແລະ ຍັງເປັນການຊ່ວຍສະໜັບສະໜູນການປະຕິບັດງານຂອງບຸກຄະລາກອນໃນແຖບຊົນນະບົດຂອງເມືອງດັ່ງກ່າວ. ໂດຍມີຈຸດປະສົງ 1. ເພື່ອພັດທະນາການສອນ ການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູ 2. ສຶກສາຜົນການທົດລອງໃຊ້ການສອນ ການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູ 3. ເພື່ອສຶກສາຄວາມເພິ່ງພໍໃຈຂອງບຸກຄະລາກອນຄູທີ່ມີຕໍ່ການສອນການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູທີ່ ໂຮງຮຽນມັດທະຍົມສົມບູນ ໂພນທອງ ເມືອງໂພນທອງ ແຂວງຫຼວງພະບາງ ສົກສຶກສາ 2020 - 2021

## 2. ອຸປະກອນ ແລະ ວິທີການ

ການສຶກການພັດທະນາການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູ ຄັ້ງນີ້ເປັນການຄົ້ນຄວ້າແບບທົດລອງກັບກຸ່ມເປົ້າໝາຍທີ່ເປັນພະນັກງານຄູສອນພາສາລາວທີ່ ໂຮງຮຽນມັດທະຍົມສົມບູນ ໂພນທອງ ເມືອງໂພນທອງ ແຂວງຫຼວງພະບາງ. ດັ່ງນັ້ນ, ຜູ້ຄົ້ນຄວ້າໄດ້ມີວິທີການດຳເນີນການຄົ້ນຄວ້າດັ່ງນີ້:

### 2.1 ກຸ່ມເປົ້າໝາຍ

ກຸ່ມເປົ້າໝາຍທີ່ໃຊ້ໃນການວິໄຈໃນຄັ້ງນີ້ເປັນພະນັກງານຄູສອນພາສາລາວທີ່ ໂຮງຮຽນມັດທະຍົມສົມບູນ ໂພນທອງ ເມືອງໂພນທອງ ແຂວງຫຼວງພະບາງ ສົກສຶກສາ 2020 – 2021 ຈຳນວນ 23 ຄົນ.

### 2.2 ຮູບແບບການຄົ້ນຄວ້າ

ການຄົ້ນຄວ້າຄັ້ງນີ້ໃຊ້ແບບແຜນການຄົ້ນຄວ້າແບບມີກຸ່ມເປົ້າໝາຍ 1 ກຸ່ມ ແລະ ມີການທົດສອບກ່ອນ ແລະ ທົດສອບຫຼັງການເຮັດການທົດລອງຮູບແບບ ( One Group Pretest - Posttest Design)

| ທົດສອບກ່ອນ (Pretest) | ທົດລອງກັບກຸ່ມເປົ້າໝາຍ (Treatment) | ທົດສອບຫຼັງ (Posttest) |
|---|---|---|
| $O_1$ | X | $O_2$ |

❖ **ສັນຍາລັກທີ່ໃຊ້ໃນການອອກແບບການຄົ້ນຄວ້າ**

X ແທນ ທົດລອງກັບກຸ່ມເປົ້າໝາຍ (Treatment)

$O_1$ ແທນ ການທົດສອບກ່ອນ (Pretest)

$O_2$ ແທນ ການທົດສອບຫຼັງ (Posttest)

### 2.3 ເຄື່ອງມືທີ່ໃຊ້ໃນການວິໄຈ

ເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ປະກອບດ້ວຍເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ 4 ຊຸດຄື:

**ເຄື່ອງມືຊຸດທີ 1:** ແຜນການສອນການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູດຳເນີນຕາມຂັ້ນຕອນຄື:

1. ສຶກສາເອກະສານ, ງານວິໄຈທີ່ກ່ຽວຂ້ອງກັບການໃຊ້ພາສາລາວຂອງຄົນລາວກໍຄືບຸກຄະລາກອນຄູໃນດ້ານຄວາມຄິດການພັດທະນາການຈັດການຮຽນ - ການສອນ, ທິດສະດີການຮຽນຮູ້, ພາສາ ແລະ ການນຳໃຊ້ພາສາລາວ,

ພາສາລາວເພື່ອການສື່ສານ ແລະ ບົດວິໃຈທີ່ກ່ຽວຂ້ອງເພື່ອ ນຳມາເປັນພື້ນຖານໃຫ້ແກ່ການສ້າງແຜນການສອນ.

2. ພັດທະນາການສອນການໃຊ້ພາສາລາວເພື່ອການ ສື່ສານສຳລັບບຸກຄະລາກອນຄູປະກອບດ້ວຍສ່ວນຕ່າງໆ ເຊັ່ນ: ຫຼັກການ ແລະ ເຫດຜົນຂອງແຜນການສອນ, ຈຸດປະສົງຂອງແຜນການສອນ, ເນື້ອໃນຂອງແຜນການ ສອນ, ສື່ການສອນ, ກິດຈະກຳການຮຽນ (ການສອນ), ການຕິດຕາມ ແລະ ການປະເມີນຜົນ.

3. ພິຈາລະນາແບບປະເມີນຄ່າດັດສະນີຄວາມ ສອດຄ່ອງ (IOC). ໂດຍການນຳເອົາຄຳຕອບຂອງຜູ້ ຊ່ຽວຊານມາກຳນົດເປັນຄະແນນໃນນັ້ນ, ດັດສະນີຄວາມ ສອດຄ່ອງເທົ່າກັບ ຫຼື ຫຼາຍກວ່າ 0.5 ຂຶ້ນໄປ ຈຶ່ງຖືວ່າ ແຜນການສອນທີ່ໄດ້ສ້າງຂຶ້ນມີຄວາມສອດຄ່ອງກັນ ແລະ ສາມາດນຳໄປໃຊ້ໄດ້.

**ເຄື່ອງມືຊຸດທີ 2:** ແບບທົດສອບກ່ອນ ແລະ ຫຼັງການ ຈັດການຮຽນ - ການສອນ ຜູ້ວິໃຈໄດ້ດຳເນີນໄປຕາມຂັ້ນ ຕອນຂອງການສ້າງເຊັ່ນ:

- ສ້າງແບບທົດສອບຊະນິດເລືອກຕອບຊະນິດ 4 ຕົວເລືອກການຕອບຄຳຖາມຈາກເນື້ອໃນ ແລະ ລາຍລະ ອຽດຈາກລະດັບຄວາມສາມາດໃນການຟັງ ແລະ ການເວົ້າ
- ການຫາຄຸນະພາບແບບທົດສອບກ່ອນ ແລະ ຫຼັງ ການການຈັດການຮຽນ ການສອນ

ນຳແບບທົດສອບກ່ອນ ແລະ ຫຼັງການຈັດການຮຽນ ການສອນພ້ອມກັບແບບປະເມີນຄວາມສອດຄ່ອງໄປໃຫ້ຜູ້ ຊ່ຽວຊານກວດສອບຄວາມທ່ຽງຕົງຂອງເນື້ອໃນໂດຍ ການສະແດງຄວາມຄິດເຫັນ. ຈາກນັ້ນ, ນຳເອົາຄຳຕອບຜູ້ ຊ່ຽວຊານມາແປງເປັນຄ່າຄະແນນດັດສະນີຄວາມສອດຄ່ອງ (IOC) ເຊັ່ນ: ຄ່າດັດສະນີຄວາມສອດຄ່ອງເທົ່າກັບ ຫຼື ຫຼາຍ ກວ່າ 0.5 ຂຶ້ນໄປຈຶ່ງຖືວ່າແບບທົດສອບດັ່ງກ່າວມີຄວາມ ສອດຄ່ອງກັນ ແລະ ສາມາດນຳໄປໃຊ້ໄດ້.

**ເຄື່ອງມືຊຸດທີ 3:** ແບບສອບຖາມຄວາມເພິ່ງພໍໃຈທີ່ ມີຕໍ່ການຈັດການຮຽນ - ການສອນ ການໃຊ້ພາສາລາວເພື່ອ ການສື່ສານສຳລັບບຸກຄະລາກອນຄູ ຜູ້ວິໃຈໄດ້ດຳເນີນການ ສ້າງ ແລະ ຫາຄຸນະພາບດັ່ງນີ້:

- ສ້າງແບບສອບຖາມເປັນມາດຕາສ່ວນປະມານຄ່າ 5 ລະດັບໂດຍມີເກນການໃຫ້ຄະແນນໃນການວິເຄາະຂໍ້ມູນ
- ການຫາຄຸນະພາບແບບສອບຖາມຄວາມເພິ່ງພໍໃຈ ທີ່ມີການຈັດການຮຽນ - ການສອນ ນຳເອົາແບບສອບຖາມ ຄວາມເພິ່ງພໍໃຈທີ່ມີຕໍ່ການຈັດການຮຽນ - ການສອນ ການ ໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູທີ່ສ້າງ ຂຶ້ນພ້ອມແບບປະເມີນຄວາມເໝາະສົມໄປໃຫ້ຜູ້ຊ່ຽວຊານ ຈຳນວນ 3 ທ່ານເພື່ອກວດສອບຄວາມທ່ຽງຕົງ ດ້ານເນື້ອ ໃນ ແລະ ພາສາທີ່ໃຊ້.

ຄະແນນທີ່ໄດ້ຈາກການປະເມີນຄວາມເໝາະສົມ ຂອງແບບສອບຖາມຄວາມເພິ່ງພໍໃຈທີ່ມີຕໍ່ຫຼັກສູດເຝິກ ອົບຮົມການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາ ກອນຄູ ສາມາດແປຄວາມໝາຍໂດຍໃຊ້ເກນຄ່າຄະແນນ ສະເລ່ຍເຊັ່ນ: ພິຈາລະນາຈາກຄ່າສະເລ່ຍຄວາມຄິດເຫັນ ຂອງຜູ້ຊ່ຽວຊານ ຕັ້ງແຕ່ 3.41 ຂຶ້ນໄປຈຶ່ງຖືວ່າແບບສອບ ຖາມຄວາມເພິ່ງພໍໃຈທີ່ມີຕໍ່ການຈັດການຮຽນ ການສອນ ການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູ ທີ່ສ້າງຂຶ້ນມີຄຸນະພາບເໝາະສົມ.

### 2.4 ການເກັບກຳຮວບຮວມຂໍ້ມູນ

ການເກັບກຳ ແລະ ຮວບຮວມຂໍ້ມູນສຳລັບການວິໃຈ ຄັ້ງນີ້ແມ່ນໄດ້ດຳເນີນຕາມຂັ້ນຕອນດັ່ງນີ້:

ສຶກສາຮວບຮວມແນວຄິດ ແລະ ການພັດທະນາ ການສອນ, ທິດສະດີການຮຽນຮູ້, ພາສາ.

ຮວບຮວມຂໍ້ມູນຈາກການປະເມີນຄວາມສອດຄ່ອງ ຂອງການສອນການໃຊ້ພາສາລາວເພື່ອການສື່ສານສຳລັບບຸກ ຄະລາກອນຄູທີ່ ໂຮງຮຽນມັດທະຍົມສົມບູນ ໂພນທອງ ເມືອງໂພນທອງແຂວງຫຼວງພະບາງຈາກຜູ້ຊ່ຽວ ຊານເພື່ອນຳ ໄປປັບປຸງແກ້ໄຂ ແລະ ນຳໄປທົດລອງເຝິກອົບຮົມກັບຄູ ສອນພາສາລາວຕໍ່ໄປ.

ຮວບຮວມຂໍ້ມູນຈາກການປະເມີນຄວາມເໝາະສົມ ຂອງຫຼັກສູດຈາກຜູ້ຊ່ຽວຊານເພື່ອນຳໄປປັບປຸງແກ້ໄຂ ແລະ ນຳໄປທົດລອງເຝິກອົບຮົມກັບຄູສອນພາສາລາວຕໍ່ໄປ.

ຮວບຮວມຂໍ້ມູນຈາກການປະເມີນແບບສອບຖາມ ຄວາມເພິ່ງພໍໃຈທີ່ມີຕໍ່ຫຼັກສູດຈາກຜູ້ຊ່ຽວຊານເພື່ອນຳໄປ ປັບປຸງແກ້ໄຂ ແລະ ນຳໄປທົດລອງເຝິກອົບຮົມກັບຄູສອນ ພາສາລາວຕໍ່ໄປ.

### 2.5 ການວິເຄາະຂໍ້ມູນ

ການປະເມີນຄວາມເໝາະສົມຂອງຫຼັກສູດເຝິກ ອົບຮົມການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາ ກອນຄູ, ແບບສອບຖາມຄວາມເພິ່ງພໍໃຈຂອງ ບຸກຄະລາ ກອນຄູໂດຍໃຊ້ຄ່າສະເລ່ຍ.

ການປະເມີນຄ່າຄວາມສອດຄ່ອງຂອງຫຼັກສູດເຝິກອົບຮົມການໃຊ້ພາສາລາວເພື່ອການສື່ສານສໍາລັບບຸກຄະລາກອນຄູ ພ້ອມດ້ວຍແບບທົດສອບການເຝິກອົບຮົມໂດຍໃຊ້ຄ່າດັດສະນີຄວາມສອດຄ່ອງ (IOC).

ປຽບທຽບຄະແນນສະເລ່ຍຜົນການເຝິກອົບຮົມຂອງບຸກຄະລາກອນຄູເຂົ້າຮ່ວມເຝິກອົບຮົມຈາກແບບທົດສອບດ້ານຄວາມຮູ້ທັກສະຂອງພາສາລາວເພື່ອການສື່ສານໂດຍການໃຊ້ຄ່າສະເລ່ຍ ແລະ ຄ່າຂອງສ່ວນບ່ຽງເບນມາດຕະຖານ.

ການວິເຄາະລະດັບຄວາມເພິ່ງພໍໃຈຕໍ່ຫຼັກສູດເຝິກອົບຮົມການໃຊ້ພາສາລາວເພື່ອການສື່ສານສໍາລັບບຸກຄະລາກອນຄູໂດຍການນໍາເອົາຄະແນນທີ່ໄດ້ຮັບຈາກການຕອບແບບສອບຖາມແປຄວາມໝາຍຕາມເກນຄ່າສະເລ່ຍທີ່ໄດ້ກໍານົດໄວ້.

## 3. ຜົນໄດ້ຮັບ

ການພັດທະນາການໃຊ້ພາສາລາວເພື່ອການສື່ສານສໍາລັບບຸກຄະລາກອນຄູທີ່ ໂຮງຮຽນມັດທະຍົມສົມບູນໂພນທອງ ເມືອງໂພນທອງ ແຂວງຫຼວງພະບາງ ສົກສຶກສາ 2020-2021 ເປັນຂະບວນການພັດທະນາການສອນການນໍາໃຊ້ພາສາລາວເພື່ອການສື່ສານມີຂັ້ນຕອນຢ່າງລະອຽດຕາມລໍາດັບຂອງການພັດທະນາຄວາມຮູ້ ຄວາມສາມາດຂອງຜູ້ເຂົ້າຮ່ວມກິດຈະກໍາ ໃນແຕ່ລະຂັ້ນຕອນໄດ້ສົ່ງເສີມຂະບວນການໃຊ້ທັກສະຕ່າງໆເຊັ່ນ: ດ້ານຄວາມຮູ້, ດ້ານການປະຕິບັດ, ດ້ານເຈຕະຄະຕິຈາກການຮຽນຮູ້ ແລະ ໄດ້ລົງມືປະຕິບັດຂອງຜູ້ເຂົ້າຮ່ວມ, ເກີດປະສົບການການນໍາໃຊ້ , ເກີດການແລກປ່ຽນປະສົບການໃນການນໍາໃຊ້ພາສາລາວເພື່ອການສື່ສານໃຫ້ຖືກຕ້ອງດ້ວຍການເຮັດກິດຈະກໍາຮ່ວມກັນ ເຊິ່ງຜົນທີ່ໄດ້ຮັບມີດັ່ງນີ້:

### 3.1 ຜົນການສຶກສາການພັດທະນາການສອນການນໍາໃຊ້ພາສາລາວເພື່ອການສື່ສານສໍາລັບບຸກຄະລາກອນຄູທີ່ ໂຮງຮຽນມັດທະຍົມສົມບູນ ໂພນທອງ ເມືອງໂພນທອງ ແຂວງຫຼວງພະບາງ

ພົບວ່າ ການຈັດກິດຈະກໍາການສອນການໃຊ້ພາສາລາວເພື່ອການສື່ສານແມ່ນມີຄວາມແຕກຕ່າງກັນຢ່າງມີຄວາມສໍາຄັນທາງສະຖິຕິທີ່ລະດັບ 0.00 ໂດຍມີຄ່າສະເລ່ຍຜົນຫຼັງການຈັດກິດຈະກໍາ ($\overline{X} = 12.83$, SD= 2.33), ສູງກວ່າຜົນກ່ອນການຈັດກິດຈະກໍາ ($\overline{X} = 15.91$, SD= 1.96).

ດັ່ງນັ້ນ, ຈຶ່ງສະຫຼຸບໄດ້ວ່າ ຜົນຫຼັງການຈັດກິດຈະກໍາແຕກຕ່າງຜົນກ່ອນການຈັດກິດຈະກໍາ ດ້ວຍລະດັບຄວາມເຊື່ອໝັ້ນ 95% ແມ່ນເປັນໄປຕາມສົມມຸດຖານທີ່ໄດ້ຕັ້ງໄວ້.

### 3.2 ການສຶກສາຜົນຄວາມເພິ່ງພໍໃຈຂອງຜູ້ເຂົ້າຮ່ວມກິດຈະກໍາທີ່ມີຕໍ່ການສອນການໃຊ້ພາສາລາວເພື່ອການສື່ສານສໍາລັບບຸກຄະລາກອນຄູທີ່ ໂຮງຮຽນມັດທະຍົມສົມບູນ ໂພນທອງ ເມືອງໂພນທອງ ແຂວງຫຼວງພະບາງ

ພົບວ່າ ຜູ້ເຂົ້າຮ່ວມມີຄວາມເພິ່ງພໍໃຈທີ່ດີຕໍ່ກັບການຈັດກິດຈະກໍາພັດທະນາການສອນການໃຊ້ພາສາລາວເພື່ອການສື່ສານ ຂອງບຸກຄະລາກອນຄູ ຢູ່ໃນລະດັບຫຼາຍທີ່ສຸດໂດຍມີຄ່າສະເລ່ຍເທົ່າກັບ ($\overline{X} = 4.51$, SD=0.61). ເມື່ອພິຈາລະນາເປັນດ້ານເຫັນວ່າ: ຜູ້ເຂົ້າຮ່ວມມີຄວາມເພິ່ງພໍໃຈໃນລະດັບຫຼາຍທີ່ສຸດຕໍ່ດ້ານການວັດ ແລະ ປະເມີນຜົນໂດຍມີຄ່າສະເລ່ຍເທົ່າກັບ ($\overline{X} = 4.56$, SD= 0.60), ຮອງລົງມາ ຜູ້ເຂົ້າຮ່ວມມີຄວາມເພິ່ງພໍໃຈໃນລະດັບຫຼາຍທີ່ສຸດແມ່ນ ດ້ານສະພາບແວດລ້ອມ ໂດຍມີຄ່າສະເລ່ຍເທົ່າກັບ ($\bar{X}$= 4.55, SD= 0.53), ຮອງລົງມາຜູ້ເຂົ້າຮ່ວມມີຄວາມເພິ່ງພໍໃຈໃນລະດັບຫຼາຍ ຕໍ່ກັບ ດ້ານກິດຈະກໍາການຮຽນການສອນ, ດ້ານການນໍາໄປໃຊ້, ດ້ານເນື້ອໃນບົດຮຽນ ແລະ ດ້ານວິທີສິດສອນ ໂດຍມີຄ່າສະເລ່ຍເທົ່າກັບ ($\overline{X} = 4.50$, SD= 0.54), ($\bar{X}$= 4.49, SD= 0.61), ($\overline{X}$ = 4.46, SD= 0.61), ($\overline{X} = 4.43$, SD= 0.56) ຕາມລໍາດັບ.

ດັ່ງນັ້ນ, ຈຶ່ງສະຫຼຸບໄດ້ວ່າຜູ້ເຂົ້າຮ່ວມມີຄວາມເພິ່ງພໍໃຈທີ່ດີຕໍ່ກັບການຈັດກິດຈະກໍາພັດທະນາການສອນການໃຊ້ພາສາລາວເພື່ອການສື່ສານ ຂອງບຸກຄະລາກອນຄູທີ່ ໂຮງຮຽນມັດທະຍົມສົມບູນ ໂພນທອງ ເມືອງໂພນທອງ ແຂວງຫຼວງພະບາງ ຢູ່ໃນລະດັບຫຼາຍທີ່ສຸດ, ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້.

## 4. ວິພາກຜົນ

ຜົນຫຼັງການຈັດກິດຈະກໍາສູງກວ່າກ່ອນການຈັດກິດຈະກໍາ ເນື່ອງຈາກວ່າ ຂະບວນການພັດທະນາການສອນການນໍາໃຊ້ພາສາລາວເພື່ອການສື່ສານມີຂັ້ນຕອນຢ່າງລະອຽດຕາມລໍາດັບຂອງການພັດທະນາຄວາມຮູ້ ຄວາມສາມາດຂອງຜູ້ເຂົ້າຮ່ວມກິດຈະກໍາ ແລະ ໄດ້ສົ່ງເສີມຂະບວນການໃຊ້ທັກສະຕ່າງໆເຊັ່ນ: ດ້ານຄວາມຮູ້, ດ້ານການປະຕິບັດ, ດ້ານເຈຕະຄະຕິຈາກການຮຽນຮູ້ ແລະ ໄດ້ລົງມືປະຕິບັດຂອງຜູ້ເຂົ້າຮ່ວມຈຶ່ງເຮັດໃຫ້ຜູ້ເຂົ້າຮ່ວມກິດຈະກໍາ

ເກີດການຮັບຮູ້ທີ່ຄົງທົນ, ມີຄວາມສຸກ ແລະ ມີຄວາມກະຕືລືລົ້ນໃຫ້ຄວາມສົນໃຈໃນການນໍາໃຊ້ພາສາລາວ, ເກີດປະສົບການການນໍາໃຊ້, ເກີດການແລກປ່ຽນປະສົບການໃນການນໍາໃຊ້ພາສາລາວເພື່ອການສື່ສານໃຫ້ຖືກຕ້ອງດ້ວຍການເຮັດກິດຈະກໍາຮ່ວມກັນ ຈຶ່ງສາມາດສົ່ງຜົນໃຫ້ຜູ້ເຂົ້າຮ່ວມກິດຈະກໍາມີຜົນທາງການພັດທະນາການໃຊ້ພາສາລາວເພື່ອການສື່ສານສໍາລັບບຸກຄະລາກອນຄູ ມີຜົນໄປຕາມສົມມຸດຖານທີ່ຕັ້ງໄວ້ເຊິ່ງສອດຄ່ອງກັບຜົນການວິໄຈຂອງ Kanchana Sienprapassorn (2536) ສຶກສາເລື່ອງຄວາມສາມາດດ້ານກົນລະວິທີການສື່ສານພາສາອັງກິດຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 6 ໃນໂຮງຮຽນສັງກັດກົມສາມັນສຶກສາ, ຜົນການວິໄຈພົບວ່າ ນັກຮຽນຊັ້ນມັດທະຍົມສຶກສາປີທີ 6 ມີຄວາມສາມາດໃນການໃຊ້ພາສາອັງກິດເພື່ອການສື່ສານຢູ່ໃນເກນຂັ້ນຕໍ່າເມື່ອຈໍາແນກຕາມແຜນການຮຽນພົບວ່ານັກຮຽນຮຽນຕາມແຜນການຮຽນວິທະຍາສາດມີຄວາມສາມາດດ້ານກົນລະວິທີການສື່ສານສູງກວ່ານັກຮຽນຮຽນຕາມແຜນສິລພາສາ ແລະ ຄວາມຖີ່ໃນການໃຊ້ກົນລະວິທີການສື່ສານນັ້ນນັກຮຽນໃຊ້ກົນລະວິທີການສື່ສານພາສາດຽວຫຼາຍທີ່ສຸດ, ຮອງລົງມາຄື: ກົນລະວິທີການໃຊ້ທ່າທາງ ແລະ ກົນລະວິທີການໃຊ້ພາສາແມ່ຕາມລໍາດັບ, ສອດຄ່ອງກັບ Kwanhathai Chirdchoo (2545) ໄດ້ສຶກສາເລື່ອງກົນລະວິທີການສື່ສານໃນການເວົ້າພາສາອັງກິດຂອງນັກສຶກສາຊັ້ນປີທີ 1 ໂປຼແກຼມພາສາອັງກິດສະຖາບັນລາດຊະພັດເພັດບູລີ ຈັງຫວັດເພັດບູລີ ຜົນການວິໄຈພົບວ່າ: ນັກສຶກສາໃຊ້ກົນລະວິທີທາງການສື່ສານຄົບທັງ 5 ຊະນິດຄື: ກົນລະວິທີການຫຼີກລຽງ, ກົນລະວິທີການໃຊ້ພື້ນຄວາມຮູ້ພາສາແມ່, ກົນລະວິທີການໃຊ້ພື້ນຄວາມຮູ້ພາສາອັງກິດ, ກົນລະວິທີການບໍ່ໃຊ້ຄໍາເວົ້າ ແລະ ກົນລະວິທີການປັບຂໍ້ຄວາມ. ກົນລະວິທີການສື່ສານທີ່ນັກ ສຶກສາໃຊ້ຫຼາຍທີ່ສຸດຄື: ກົນລະວິທີປັບຂໍ້ຄວາມ ແລະ ກົນລະວິທີທີ່ນັກສຶກສາໃຊ້ໜ້ອຍທີ່ສຸດຄື: ກົນລະວິທີບໍ່ໃຊ້ພາສາ ນັກສຶກສາທີ່ມີຄວາມສາມາດທາງການເວົ້າພາສາອັງກິດຕ່າງກັນມີຄວາມຖີ່ໃນການໃຊ້ກົນລະວິທີການສື່ສານທັງຫ້າຊະນິດແຕກຕ່າງກັນຢ່າງມີໄນສໍາຄັນທາງສະຖິຕິທີ່ລະດັບ 0.05 ນັກສຶກສາທີ່ມີຄວາມສາມາດໃນການເວົ້າພາສາອັງກິດລະດັບສູງ ແລະ ລະດັບປານກາງໃຊ້ກົນລະວິທີການປັບຂໍ້ຄວາມຫຼາຍທີ່ສຸດ ແລະ ນັກສຶກສາທີ່ມີຄວາມສາມາດໃນການເວົ້າພາສາອັງກິດໃນລະດັບຕໍ່າໃຊ້ກົນລະວິທີໃຊ້ພື້ນຖານຄວາມຮູ້ພາສາອັງກິດຫຼາຍທີ່ສຸດ, ນັກສຶກສາທີ່ມີຄວາມສາມາດທາງການເວົ້າພາສາອັງກິດລະດັບສູງໃຊ້ກົນລະວິທີການບໍ່ໃຊ້ຄໍາເວົ້າໜ້ອຍທີ່ສຸດ ແລະ ນັກສຶກສາທີ່ມີຄວາມສາມາດທາງການເວົ້າພາສາອັງກິດລະດັບປານກາງ ແລະ ລະດັບຕໍ່າໃຊ້ພື້ນຄວາມຮູ້ທາງພາສາແມ່ໜ້ອຍທີ່ສຸດ. ຈາກຜົນການວິໄຈຫຼາຍໆຫົວຂໍ້ເຫັນໄດ້ວ່າ: ການພັດທະນາການນໍາໃຊພາສາລາວເພື່ອການສື່ສານສໍາລັບບຸກຄະລາກອນຄູທີ່ ໂຮງຮຽນມັດທະຍົມສົມບູນ ໂພນທອງ ເມືອງໂພນທອງ ແຂວງຫຼວງພະບາງ ສາມາດຊ່ວຍໃຫ້ບຸກຄະລາກອນຄູມີຜົນຂອງການພັດທະນາທັກສະການນໍາໃຊ້ພາສາລາວເພື່ອການສື່ສານສູງຂຶ້ນ ແລະ ສົ່ງຜົນໃຫ້ປະສິດທິພາບໃນການໃຊ້ພາສາລາວໃຫ້ຖືກຕ້ອງໃນສັງຄົມກໍ່ຄືບຸກຄະລາກອນຄູໃນເມືອງໂພນທອງ, ເປັນການພັດ ທະນາທີ່ມີຄວາມໝາຍສູງກວ່າເກົ່າ ແລະ ເກີດເປັນການຮັບຮູ້ທີ່ຄົງທົນໄດ້.

ຜົນການສຶກສາຄວາມເພິ່ງພໍໃຈຂອງຜູ້ເຂົ້າຮ່ວມກິດຈະກໍາການພັດທະນາການສອນການນໍາໃຊ້ພາສາລາວເພື່ອການສື່ສານພົບວ່າ: ຜູ້ເຂົ້າຮ່ວມມີຄວາມເພິ່ງພໍໃຈທີ່ດີຕໍ່ກັບການຈັດກິດຈະກໍາພັດທະນາການສອນການໃຊ້ພາສາລາວເພື່ອການສື່ສານ ຂອງບຸກຄະລາກອນຄູທີ່ ໂຮງຮຽນມັດທະຍົມສົມບູນ ໂພນທອງ ເມືອງໂພນທອງ ແຂວງຫຼວງພະບາງ ຢູ່ໃນລະດັບຫຼາຍທີ່ສຸດ. ເມື່ອພິຈາລະນາເປັນດ້ານເຫັນວ່າ ຜູ້ເຂົ້າຮ່ວມມີຄວາມເພິ່ງພໍໃຈໃນລະດັບຫຼາຍທີ່ສຸດຕໍ່ດ້ານການວັດ ແລະ ປະເມີນຜົນ, ຮອງລົງມາ ຜູ້ເຂົ້າຮ່ວມມີຄວາມເພິ່ງພໍໃຈໃນລະດັບຫຼາຍທີ່ສຸດແມ່ນ ດ້ານສະພາບແວດລ້ອມ, ຮອງລົງມາຜູ້ເຂົ້າຮ່ວມມີຄວາມເພິ່ງພໍໃຈໃນລະດັບຫຼາຍ ຕໍ່ກັບ ດ້ານກິດຈະກໍາການຮຽນການສອນ, ດ້ານການນໍາໄປໃຊ້, ດ້ານເນື້ອໃນບົດຮຽນ ແລະ ດ້ານວິທີສິດສອນ ຕາມລໍາດັບ. ດັ່ງນັ້ນ, ຈຶ່ງສະຫຼຸບໄດ້ວ່າຜູ້ເຂົ້າຮ່ວມມີຄວາມເພິ່ງພໍໃຈທີ່ດີຕໍ່ກັບການຈັດກິດຈະກໍາພັດທະນາການສອນການໃຊ້ພາສາລາວເພື່ອການສື່ສານ ຂອງບຸກຄະລາກອນຄູທີ່ ໂຮງຮຽນມັດທະຍົມສົມບູນ ໂພນທອງ ເມືອງໂພນທອງ ແຂວງຫຼວງພະບາງ ຢູ່ໃນລະດັບຫຼາຍທີ່ສຸດ, ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ ເຊິ່ງສອດຄ່ອງກັບຜົນການວິໄຈຂອງ Asawarit Uthairat (2537) ໄດ້ສຶກສາຄວາມເພິ່ງພໍໃຈໃນການຕິດຕໍ່ສື່ສານໃນອົງການກັບຄວາມເພິ່ງພໍໃຈໃນການປະຕິບັດງານຂອງພະນັກງານອົງການຂົນສົ່ງມວນຊົນກຸງເທບພົບວ່າ: ອົງປະກອບທາງສັງຄົມດ້ານສັງຄົມ, ດ້ານອາຍຸ, ລະດັບການສຶກສາ ແລະ ໄລຍະເວລາ

ຂອງການທຳງານມີຄວາມສຳພັນກັບຄວາມເພິ່ງພໍໃຈໃນການຕິດຕໍ່ສື່ສານໃນອົງການ ແລະ ພະນັກງານສ່ວນໃຫຍ່ມີຄວາມເພິ່ງພໍໃຈໃນການຕິດຕໍ່ສື່ສານ ແລະ ຄວາມເພິ່ງພໍໃຈໃນການປະຕິບັດການຢູ່ໃນລະດັບປານກາງ.

**5. ສະຫຼຸບ**

ຈາກການສຶກສາວິໄຈທີ່ກ່ຽວກັບ ການພັດທະນາການສອນການນຳໃຊ້ພາສາລາວເພື່ອການສື່ສານສາມາດສະຫຼຸບໄດ້ວ່າ ການຈັດກິດຈະກຳການພັດທະນາການສອນການນຳໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູເປັນການຈັດກິດຈະກຳທີ່ເຮັດໃຫ້ຜູ້ເຂົ້າຮ່ວມເປັນສ່ວນໜຶ່ງໃນກິດຈະກຳ ແລະ ເປັນຜູ້ທີ່ມີຄວາມພ້ອມໃນເລື່ອງການຮຽນຮູ້ ແລະ ເຂົ້າໃຈໃນການໃຊ້ພາສາລາວທີ່ຖືກຕ້ອງຕາມຫຼັກການທາງໄວຍາກອນ ແລະ ຫຼັກການທາງພາສາຫຼາຍທີ່ສຸດ ເຊິ່ງສິ່ງຜົນໃຫ້ຜູ້ເຂົ້າຮ່ວມມີຜົນຂອງການນຳໃຊ້ພາສາລາວສູງຂຶ້ນ, ຜູ້ເຂົ້າຮ່ວມໄດ້ປະສົບການຈາກການຮຽນຮູ້ ແລະ ການລົງມືປະຕິບັດຈິງ ເກີດຄວາມສົນໃຈ, ມີຄວາມຕື່ນຕົວ, ມີຄວາມສຸກກັບການເຝິກປະຕິບັດ ເຊິ່ງກໍ່ໃຫ້ເກີດ ຄວາມສາມາດ, ຄວາມຄິດ ແລະ ກະຕຸ້ນໃຫ້ຜູ້ເຂົ້າຮ່ວມກິດຈະກຳໄດ້ໃຊ້ທັກສະຢ່າງເຕັມທີ່ໃນການຮຽນຮູ້ , ຊ່ວຍໃຫ້ມີໂອກາດສ້າງປະຕິສຳພັນກັບເພື່ອນຮ່ວມງານ ແລະ ສະພາບແວດລ້ອງອ້ອມຕົວຕະຫຼອດຈົນສາມາດສ້າງອົງຄວາມຮູ້ໄດ້ດ້ວຍຕົນເອງ, ນຳຄວາມຮູ້ທີ່ໄດ້ເຝິກໄປປະຍຸກໃຊ້ໃນສະພາບຄວາມເປັນຈິງໄດ້ໃນທຸກໆສະຖານະການຈິງ.

**6. ຂໍ້ຂັດແຍ່ງ**

ພວກຂ້າພະເຈົ້າ ທີມງານນັກຄົ້ນຄວ້າ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຜົນປະໂຫຍດແອບແຝງໃດໆ ກັບອົງກອນສະເໜີທຶນ.

**7. ເອກະສານອ້າງອີງ**

Sienprapassorn, K. (2536). English strategic competence of mathayom suksa six Students in schools under the jurisdiction of the department of general education

Chirdchoo, K. (2537). A study of communication strategies used in Speaking english by first year students in the english program in Rajabhat institute phetchaburi province Silpakorn University. Theses (Master's degree) - Teaching English/Teaching English as a Foreign. Silpakorn University

Uthairat, A. (1994) Satisfaction in communication in the organization. and job satisfaction of Bangkok Mass Transit Authority employees /. Chulalongkorn University: M.P.A.T. 10.14457/CU.the.1994.230

Charoonroj, C. (2552). Introduction to Linguistics. Department of Linguistics Faculty of Humanities Kasetsart University

Yimkuntithavorn, S. (2556). Basic knowledge: that English teachers should know about Pronunciation. Bangkok: Chulalongkorn University Press, 2012_1st edition

Kaewkangwan, S. (2548). Language and Thought: We think with language. Bangkok: Chulalongkorn University, 2005

Teacher Development Center. (1998). Lao Language **1**. Use for 11+3 teacher system in year 1. Ministry of Education and Sports Publishing House.

Teacher Development Center. (2009). Lao Language **2**. Use for 11+3 teacher system in year 2. Ministry of Education and Sports Publishing House.

Teacher Development Center. (2009). Lao Language **3**. Use for 11+3 teacher system in year 2. Ministry of Education and Sports Publishing House.

Wiriyachitra, A. (2532). Language teaching for communication. Bangkok: Aksorn Charoen Tat

Fongsri, P. (2553). Creation and development of research tools. 2nd edition. Bangkok: Tonkaew. 2553

Slavin, R.E. (2005). Cooperative learning "theory, research and practice. London: Allyn and Bacon.

Johns Hopkins University. (2006). Education psychology "theory and practice" eighth edition.

Johns Hopkins University: Pearson Education International.

Oller, J.W. Jr. Pragmatics and Language Testing. In B. Spolsky (Ed.), Approaches to Language Testing. Arlington, Virginia: Center for Applied Linguistics, 1978.

Vygotsky, L.S. 1962. Thought and Language. Edited and translated by Eugenia.

ຕາຕະລາງທີ 1: ສະແດງຜົນການວິເຄາະຂໍ້ມູນຈາກແບບທົດສອບຂອງຜູ້ເຂົ້າຮ່ວມກິດຈະກໍາການສອນການໃຊ້ພາສາລາວເພື່ອການສື່ສານ

| ຜົນການຮຽນ | ຄະແນນລວມ | ກຸ່ມຕົວຢ່າງ | ຄະແນນສະເລ່ຍ | ຄ່າຜັນປ່ຽນມາຕະຖານ | ສະຖິຕິທົດສອບ | ການປຽບທຽບສົມມຸດຖານ |
|---|---|---|---|---|---|---|
| ກ່ອນການທົດລອງ | 295 | 23 | 12.83 | 2.33 | 8.56 | 0.00 |
| ຫຼັງການທົດລອງ | 366 | 23 | 15.91 | 1.96 | | |

ຕາຕະລາງທີ 2 ຂໍ້ມູນສ່ວນຕົວຂອງຜູ້ເຂົ້າຮ່ວມກິດຈະກໍາການສອນການໃຊ້ພາສາລາວເພື່ອການສື່ສານ

| ລດ | ລາຍການປະເມີນ | ຈໍານວນ | ເປີເຊັນ |
|---|---|---|---|
| ຂໍ້ມູນດ້ານ ເພດ | | | |
| 1 | ເພດຍິງ | 13 | 56.52 |
| 2 | ເພດຊາຍ | 10 | 43.48 |
| | ລວມ | | 100 |
| ຂໍ້ມູນດ້ານ ອາຍຸ | | | |
| 1 | 20 – 30 | 14 | 60.87 |
| 2 | 31 – 40 | 7 | 30.43 |
| 3 | 40 – 45 | 2 | 8.7 |
| 4 | 46 ປີຂຶ້ນໄປ | 0 | 0 |
| | ລວມ | | 100 |

ຕາຕະລາງທີ 3 ສະແດງຄວາມເພິ່ງພໍໃຈຂອງຜູ້ເຂົ້າຮ່ວມທີ່ມີຕໍ່ເນື້ອໃນບົດຮຽນການສອນການໃຊ້ພາສາລາວເພື່ອການສື່ສານ ດ້ານ ເນື້ອໃນບົດຮຽນ

| ລ/ດ | ເນື້ອໃນການປະເມີນ | ຄວາມເພິ່ງພໍໃຈ | | |
|---|---|---|---|---|
| | | $\bar{X}$ | $SD$ | ແປຄວາມໝາຍ |
| **I** | **ດ້ານ ເນື້ອໃນບົດຮຽນ** | | | |
| 1 | ເນື້ອໃນທີ່ຄູນໍາມາສອນມີຄວາມຊັດເຈນ | 4.57 | 0.51 | ເພິ່ງພໍໃຈຫຼາຍທີ່ສຸດ |
| 2 | ເນື້ອໃນທີ່ຄູນໍາມາສອນມີປະໂຫຍດຄວນສຶກສາຮໍ່າຮຽນ | 4.70 | 0.47 | ເພິ່ງພໍໃຈຫຼາຍທີ່ສຸດ |
| 3 | ເນື້ອໃນທີ່ຄູນໍາມາສອນມີການລຽງລໍາດັບຢ່າງເໝາະສົມ | 4.35 | 0.65 | ເພິ່ງພໍໃຈຫຼາຍ |
| 4 | ເນື້ອໃນທີ່ຄູນໍາມາສອນມີຄວາມສອດຄ່ອງກັບຄວາມຮູ້ພື້ນຖານຂອງຜູ້ຮຽນ | 4.52 | 0.59 | ເພິ່ງພໍໃຈຫຼາຍທີ່ສຸດ |
| 5 | ເນື້ອໃນທີ່ຄູນໍາມາສອນມີຄວາມເໝາະສົມກັບເວລາ | 4.17 | 0.72 | ເພິ່ງພໍໃຈຫຼາຍ |
| | **ສະເລ່ຍລວມ** | **4.46** | **0.61** | **ເພິ່ງພໍໃຈຫຼາຍ** |

ຕາຕະລາງທີ 4 ສະແດງຄວາມເພິ່ງພໍໃຈຂອງຜູ້ເຂົ້າຮ່ວມທີ່ມີຕໍ່ວິທີສິດສອນ ການໃຊ້ພາສາລາວເພື່ອການສື່ສານດ້ານ ວິທີສິດສອນ

| ລ/ດ | ເນື້ອໃນການປະເມີນ | ຄວາມເພິ່ງພໍໃຈ | | |
|---|---|---|---|---|
| | | $\bar{X}$ | $SD$ | ແປຄວາມໝາຍ |
| **II** | **ດ້ານວິທີສິດສອນ** | | | |
| 1 | ການກິດຈະກຳການພັດທະນາການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູ ສາມາດສ້າງໃຫ້ຜູ້ຮຽນມີຄວາມເຂົ້າໃຈຕໍ່ບົດຮຽນຫຼາຍ | 4.39 | 0.58 | ເພິ່ງພໍໃຈຫຼາຍ |
| 2 | ເທັກນິກການສອນການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູເຮັດໃຫ້ຜູ້ຮຽນມີສ່ວນຮ່ວມໃນການປະກອບຄຳຄິດຄຳເຫັນ | 4.48 | 0.51 | ເພິ່ງພໍໃຈຫຼາຍ |
| 3 | ການໃຊ້ເທັກນິກການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູສ້າງໃຫ້ຜູ້ຮຽນກ້າສະແດງອອກ | 4.65 | 0.49 | ເພິ່ງພໍໃຈຫຼາຍທີ່ສຸດ |
| 4 | ເທັກນິກ ການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູເຮັດໃຫ້ຜູ້ຮຽນໄດ້ສ້າງຜົນງານດ້ວຍຕົນເອງ | 4.30 | 0.63 | ເພິ່ງພໍໃຈຫຼາຍ |
| 5 | ວິທີສິດສອນທີ່ນຳມາໃຊ້ສາມາດຮັບປະກັນດ້ານຄວາມຮູ້, ຄວາມຄິດ ແລະ ຄວມສາມາດ | 4.30 | 0.56 | ເພິ່ງພໍໃຈຫຼາຍ |
| **ສະເລ່ຍລວມ** | | **4.43** | **0.56** | **ເພິ່ງພໍໃຈຫຼາຍ** |

ຕາຕະລາງທີ 5 ສະແດງຄວາມເພິ່ງພໍໃຈຂອງຜູ້ເຂົ້າຮ່ວມທີ່ມີຕໍ່ການຈັດກິດຈະກຳການສອນການໃຊ້ພາສາລາວເພື່ອການສື່ສານດ້ານ ກິດຈະກຳການຮຽນ - ການສອນ

| ລ/ດ | ເນື້ອໃນການປະເມີນ | ຄວາມເພິ່ງພໍໃຈ | | |
|---|---|---|---|---|
| | | $\bar{X}$ | $SD$ | ແປຄວາມໝາຍ |
| **III** | **ດ້ານກິດຈະກຳການຮຽນ - ການສອນ** | | | |
| 1 | ກິດຈະກຳທີ່ມອບໃຫ້ຜູ້ຮຽນປະຕິບັດມີຄວາມເໝາະສົມກັບເວລາ | 4.35 | 0.57 | ເພິ່ງພໍໃຈຫຼາຍ |
| 2 | ການເຮັດກິດຈະກຳການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູ ຊ່ວຍໃຫ້ຜູ້ຮຽນເກີດການຄົ້ນຄິດ ແລະ ມີສ່ວນຮ່ວມໃນການວາງແຜນເຮັດວຽກເປັນກຸ່ມກັບໝູ່ເພື່ອນ | 4.70 | 0.47 | ເພິ່ງພໍໃຈຫຼາຍທີ່ສຸດ |
| 3 | ການເຮັດກິດຈະກຳການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູ ເຮັດໃຫ້ຜູ້ຮຽມີສ່ວນຮ່ວມໃນການວາງແຜນເຮັດວຽກເປັນກຸ່ມກັບໝູ່ເພື່ອນ | 4.48 | 0.51 | ເພິ່ງພໍໃຈຫຼາຍ |
| 4 | ຜູ້ຮຽນມັກການໃຊ້ພາສາລາວເພື່ອການສື່ສານສຳລັບບຸກຄະລາກອນຄູ ໂດຍໃຊ້ເທັກນິກການສອນI | 4.30 | 0.47 | ເພິ່ງພໍໃຈຫຼາຍ |
| 5 | ການປະຕິບັດກິດຈະກຳມີຄວາມສະດວກ ແລະ ເຂົ້າໃຈງ່າຍ | 4.65 | 0.57 | ເພິ່ງພໍໃຈຫຼາຍທີ່ສຸດ |
| | **ສະເລ່ຍລວມ** | **4.50** | **0.54** | **ເພິ່ງພໍໃຈຫຼາຍ** |

ຕາຕະລາງທີ 6 ສະແດງຄວາມເພິ່ງພໍໃຈຂອງຜູ້ເຂົ້າຮ່ວມທີ່ມີຕໍ່ການຈັດກິດຈະກຳການສອນການໃຊ້ພາສາລາວເພື່ອການສື່ສານດ້ານ ສະພາບແວດລ້ອມ

| ລ/ດ | ເນື້ອໃນການປະເມີນ | ຄວາມເພິ່ງພໍໃຈ | | |
|---|---|---|---|---|
| | | $\bar{X}$ | $SD$ | ແປຄວາມໝາຍ |
| **IV** | **ດ້ານສະພາບແວດລ້ອມ** | | | |
| 1 | ການຮຽນການໃຊ້ພາສາລາວເພື່ອການສື່ສານສໍາລັບບຸກຄະລາກອນຄູ ການໃຊ້ ພາສາລາວເພື່ອການສື່ສານສໍາລັບບຸກຄະລາກອນຄູ ໂດຍຈັດກິດຈະກໍາກຸ່ມຊ່ວຍເຮັດໃຫ້ເກີດການຮຽນຮູ້ໄດ້ດີກວ່າຮຽນເປັນບຸກຄົນ | 4.43 | 0.66 | ເພິ່ງພໍໃຈຫຼາຍ |
| 2 | ກິດຈະກໍາການການໃຊ້ພາສາລາວເພື່ອການສື່ສານສໍາລັບບຸກຄະລາກອນຄູ ຊ່ວຍໃຫ້ຜູ້ຮຽນມີຄວາມສາມັກຄີກັນ ເກີດການຮຽນຮູ້ເຊິ່ງກັນ ແລະ ກັນ | 4.65 | 0.49 | ເພິ່ງພໍໃຈຫຼາຍທີ່ສຸດ |
| 3 | ການເຮັດກິດຈະກໍາການໃຊ້ພາສາລາວເພື່ອການສື່ສານສໍາລັບບຸກຄະລາກອນຄູ ເຮັດໃຫ້ຜູ້ຮຽນໄດ້ ສະແຫວງ ຫາຄວາມຮູ້ດ້ວຍຕົນເອງ | 4.48 | 0.51 | ເພິ່ງພໍໃຈຫຼາຍ |
| 4 | ການເຮັດກິດຈະກໍາການໃຊ້ພາສາລາວເພື່ອການສື່ສານສໍາລັບບຸກຄະລາກອນຄູ ເຮັດໃຫ້ຜູ້ຮຽນມີການແລກປ່ຽນຄວາມຮູ້ ແລະ ປະສົບການໃໝ່ໆພາຍໃນກຸ່ມ | 4.52 | 0.51 | ເພິ່ງພໍໃຈຫຼາຍທີ່ສຸດ |
| 5 | ການເຮັດກິດຈະກໍາການໃຊ້ພາສາລາວເພື່ອການສື່ສານສໍາລັບບຸກຄະລາກອນຄູ ເຮັດໃຫ້ຜູ້ຮຽນມີສ່ວນຮ່ວມກິດຈະກໍາໄດ້ດີຂຶ້ນ | 4.65 | 0.49 | ເພິ່ງພໍໃຈຫຼາຍທີ່ສຸດ |
| | **ສະເລ່ຍລວມ** | **4.55** | **0.53** | **ເພິ່ງພໍໃຈຫຼາຍທີ່ສຸດ** |

ຕາຕະລາງທີ 7 ສະແດງຄວາມເພິ່ງພໍໃຈຂອງຜູ້ເຂົ້າຮ່ວມທີ່ມີຕໍ່ການຈັດກິດຈະກໍາການສອນການໃຊ້ພາສາລາວເພື່ອການສື່ສານ ດ້ານ ການວັດ ແລະ ປະເມີນຜົນ

| ລ/ດ | ເນື້ອໃນການປະເມີນ | ຄວາມເພິ່ງພໍໃຈ | | |
|---|---|---|---|---|
| | | $\bar{X}$ | $SD$ | ແປຄວາມໝາຍ |
| **V** | **ດ້ານການວັດ ແລະ ປະເມີນຜົນ** | | | |
| 1 | ການປະເມີນມີຄວາມສອດຄ່ອງກັບໄວການຮັບຮູ້ຂອງຜູ້ຮຽນ | 4.65 | 0.49 | ເພິ່ງພໍໃຈຫຼາຍທີ່ສຸດ |
| 2 | ການປະເມີນມີການໃຊ້ເກນກໍານົດຢ່າງເໝາະສົມ | 4.43 | 0.66 | ເພິ່ງພໍໃຈຫຼາຍ |
| 3 | ການປະເມີນຜົນຂອງຄູມີຄວາມຫຼາກຫຼາຍ | 4.65 | 0.57 | ເພິ່ງພໍໃຈຫຼາຍທີ່ສຸດ |
| 4 | ພວກນ້ອງມີຄວາມເພິ່ງພໍໃຈໜ້ອຍ - ຫຼາຍປານໃດໃນການປະເມີນຜົນຂອງຄູ | 4.57 | 0.51 | ເພິ່ງພໍໃຈຫຼາຍທີ່ສຸດ |
| 5 | ຫຼັງຈາກການປະຕິບັດກິດຈະກໍາແຕ່ລະຄັ້ງຄູໄດ້ແຈ້ງຜົນງານໃຫ້ຜູ້ຮຽນຮັບຮູ້ທຸກຄັ້ງ | 4.48 | 0.73 | ເພິ່ງພໍໃຈຫຼາຍ |
| | **ສະເລ່ຍລວມ** | **4.56** | **0.60** | **ເພິ່ງພໍໃຈຫຼາຍທີ່ສຸດ** |

ຕາຕະລາງທີ 8 ສະແດງຄວາມເພິ່ງພໍໃຈຂອງຜູ້ເຂົ້າຮ່ວມທີ່ມີຕໍ່ການຈັດກິດຈະກໍາການສອນການໃຊ້ພາສາລາວເພື່ອການສື່ສານ ດ້ານ ການນໍາໄປໃຊ້

| ລ/ດ | ເນື້ອໃນການປະເມີນ | ຄວາມເພິ່ງພໍໃຈ | | |
|---|---|---|---|---|
| | | $\bar{X}$ | $SD$ | ແປຄວາມໝາຍ |
| **VI** | **ດ້ານການນໍາໄປໃຊ້** | | | |
| 1 | ສາມາດເຂົ້າໃຈຄວາມໝາຍຂອງການໃຊ້ພາສາລາວເພື່ອການສື່ສານສໍາລັບບຸກຄະລາກອນຄູ | 4.48 | 0.59 | ເພິ່ງພໍໃຈຫຼາຍ |
| 2 | ສາມາດ ໃຊ້ພາສາລາວເພື່ອການສື່ສານ ໄດ້ | 4.61 | 0.50 | ເພິ່ງພໍໃຈຫຼາຍທີ່ສຸດ |
| 3 | ສາມາດນໍາເອົາຄວາມຮູ້ໄປໃຊ້ໃນຊີວິດປະຈໍາວັນໄດ້ | 4.65 | 0.65 | ເພິ່ງພໍໃຈຫຼາຍທີ່ສຸດ |
| 4 | ສາມາດໃຫ້ຄໍາເປີກສາແກ່ໝູ່ເພື່ອນທີ່ຮຽນຮ່ວມກັນໄດ້ | 4.26 | 0.62 | ເພິ່ງພໍໃຈຫຼາຍ |
| 5 | ສາມາດນໍາເອົາຄວາມຮູ້ທີ່ໄດ້ຮັບໄປເຜີຍແຜ່ ຫຼື ຖ່າຍທອດໃຫ້ໝູ່ໄດ້ | 4.43 | 0.66 | ເພິ່ງພໍໃຈຫຼາຍ |
| | **ສະເລ່ຍລວມ** | **4.49** | **0.61** | **ເພິ່ງພໍໃຈຫຼາຍ** |

ຕາຕະລາງທີ 9: ສະແດງເຖິງລະດັບຄວາມເພິ່ງພໍໃຈຂອງຜູ້ເຂົ້າຮ່ວມກິດຈະກໍາທີ່ມີຕໍ່ການຈັດກິດຈະກໍາພັດທະນາການສອນການໃຊ້ພາສາລາວເພື່ອການສື່ສານ ຂອງບຸກຄະລາກອນຄູທີ່ ໂຮງຮຽນມັດທະຍົມສົມບູນ ໂພນທອງ ເມືອງໂພນທອງ ແຂວງຫຼວງພະບາງ ໂດຍລວມມີ 6 ດ້ານ.

| ລ/ດ | ເນື້ອໃນການປະເມີນ | ຄວາມເພິ່ງພໍໃຈ | | |
|---|---|---|---|---|
| | | $\bar{X}$ | $SD$ | ແປຄວາມໝາຍ |
| 1 | ດ້ານ ເນື້ອໃນບົດຮຽນ | 4.46 | 0.61 | ເພິ່ງພໍໃຈຫຼາຍ |
| 2 | ດ້ານວິທີສິດສອນ | 4.43 | 0.56 | ເພິ່ງພໍໃຈຫຼາຍ |
| 3 | ດ້ານກິດຈະກໍາການຮຽນ - ການສອນ | 4.50 | 0.54 | ເພິ່ງພໍໃຈຫຼາຍ |
| 4 | ດ້ານສະພາບແວດລ້ອມ | 4.55 | 0.53 | ເພິ່ງພໍໃຈຫຼາຍທີ່ສຸດ |
| 5 | ດ້ານການວັດ ແລະ ປະເມີນຜົນ | 4.56 | 0.60 | ເພິ່ງພໍໃຈຫຼາຍທີ່ສຸດ |
| 6 | ດ້ານການນໍາໄປໃຊ້ | 4.49 | 0.61 | ເພິ່ງພໍໃຈຫຼາຍ |
| | **ສະເລ່ຍລວມ** | **4.51** | **0.61** | **ເພິ່ງພໍໃຈຫຼາຍທີ່ສຸດ** |